ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

ສປປ ລາວ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະຖານສາກົນ ກ່ຽວກັບການຄຸ້ມຄອງ, ການບັງຄັບໃຊ້ກົດໝາຍ, ຕຸລາການ ແລະ ການຮ່ວມມື ລະຫວ່າງ ປະເທດທາງອາຍາ

ໃນລະຫວ່າງ ວັນທີ 25-26 ມີນາ 2025, ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ, ທະນາຄານແຫ່ງ ສປປ ລາວ ແລະ ອົງການໄອຍະການປະຊາຊົນສູງສຸດ, ຮ່ວມກັບ ສະຖາບັນຊ່ວຍເຫຼືອດ້ານກົດໝາຍ ແລະ ວິຊາການ, ສະຖານເອກອັກຄະຣາຊະທູດ ແຫ່ງ ຣາຊະອານາຈັກ ໄທ ປະຈຳ ສປປ ລາວ ແລະ ລັດຖະບານແຫ່ງລາຊະອານາຈັກ ລຸກຊຳບວກ ໄດ້ຮ່ວມກັນຈັດກອງປະຊຸມລະດັບຊາດ ຫົວຂໍ້: “ຍົກສູງການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ເສັ້ນທາງ ຂອງ ສປປ ລາວ ໃນການປະຕິບັດມາດຕະຖານສາກົນ ກ່ຽວກັບການຄຸ້ມຄອງ, ການບັງຄັບໃຊ້ກົດໝາຍ, ຕຸລາການ ແລະ ການຮ່ວມມື ລະຫວ່າງ ປະເທດທາງອາຍາ” ພາຍໃຕ້ການເປັນປະທານຂອງ ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົ່າ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ທ່ານ ຄຳເພັດ ສີມວໍລະຈິດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສປປ ລາວ, ທ່ານ ໂທມາສ ລາມມາ, ອຸປະທູດແຫ່ງ ຣາຊະອານາຈັກ ລຸກຊຳບວກ ແລະ ທ່ານ ຣິຊາດ ຟິລິບປາ, ປະທານ ແລະ ຫົວໜ້າສະຖາບັນຊ່ວຍເຫຼືອດ້ານກົດໝາຍ ແລະ ວິຊາການ. ກອງປະຊຸມ ຍັງໄດ້ຮັບກຽດຕ້ອນຮັບການເຂົ້າຮ່ວມ ແລະ ກ່າວເປີດກອງປະຊຸມໂດຍ ທ່ານ ສະເໜີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ

ຜູ້ຊີ້ນຳວຽກງານຂົງເຂດເສດຖະກິດ ແລະ ການພົວພັນຮ່ວມມືກັບຕ່າງປະເທດ, ທັງເປັນ ປະທານຄະນະກຳມະການແຫ່ງ ຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ແລະ ມີຜູ້ເຂົ້າຮ່ວມຈາກຂະ ແໜງການອື່ນທີ່ກ່ຽວຂ້ອງຫຼາຍກວ່າ 200 ທ່ານ.

ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້, ກໍ່ເພື່ອສ້າງຄວາມຮັບຮູ້ ກ່ຽວກັບອົງການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍສະເພາະບົດຮຽນຂອງຕ່າງປະເທດ ກ່ຽວກັບການນຳເອົາປະເທດອອກ ຈາກບັນຊີສີເທົາ ຂອງອົງການຕ້ານການຟອກເງິນສາກົນ (Financial Action Task Force "FATF"). ໃນໂອກາດນີ້, ທ່ານ ສະເຫຼີມໄຊ ກົມມະສິດ ໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມ ຈົ່ງພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແລະ ແລກປ່ຽນບົດຮຽນໃນແຕ່ລະບັນຫາ ດ້ວຍຄວາມຮັບຜິດຊອບສູງ, ສ້າງສັນ, ມີປະໂຫຍດສູງສຸດ ແລະ ນຳເອົາບົດຮຽນທີ່ ຖອດຖອນໄດ້ມາໝູນໃຊ້ເຂົ້າໃນວຽກງານຕົວຈິງ ກໍຄື ການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ ການຮ້າຍ, ການນຳເອົາປະເທດເຮົາອອກຈາກບັນຊີສີເທົາ ຂອງອົງການຕ້ານການຟອກເງິນສາກົນ, ຕ້ານ ແລະ ສະກັດກັ້ນ ອາຊະຍາກຳຂ້າມຊາດ ຢ່າງມີປະສິດທິຜົນ, ປະກອບສ່ວນເຮັດໃຫ້ປະເທດເຮົາມີຄວາມສະຫງົບ, ຍຸຕິທຳ ແລະ ສີວິໄລ ຢ່າງບໍ່ຢຸດຢັ້ງ. ພ້ອມນີ້, ທ່ານ ນາງ ຂັນແກ້ວ ຫຼ້າມະນີເງົາ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ຍັງໄດ້ເນັ້ນໜັກຕໍ່ ທີ່ປະຊຸມວ່າ: ວຽກງານຕ້ານ ການຟອກເງິນ ແລະ ການ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນຕິດພັນກັບ ທຸກພາກສ່ວນ, ພ້ອມທັງ ເນັ້ນໜັກໃຫ້ອົງການຈັດຕັ້ງ ພາກລັດ ແລະ ເອກະຊົນຂອງ ສປປ ລາວ ເອົາໃຈໃສ່ຍົກ ສູງວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ໂດຍສະເພາະໃນປັດຈຸບັນທີ່ ສປປ ລາວ ໄດ້ຖືກຈັດຢູ່ໃນບັນຊີສີເທົາ ຂອງອົງການຕ້ານ ການຟອກເງິນສາກົນ; ຮຽກຮ້ອງໃຫ້ບັນດາພາກສ່ວນ ກ່ຽວຂ້ອງ ເອົາໃຈໃສ່ປະສານຮ່ວມມືໃນການແກ້ໄຂ ຂໍ້ຄົງຄ້າງຕາມການປະເມີນຜົນຮອບດ້ານ (Mutual Evaluation) ຂອງ ສປປ ລາວ ໃຫ້ສຳເລັດທັນຕາມ ບຸລິມະສິດ, ໂດຍສະເພາະ ອົງການປົ້ງຄັບໃຊ້ກົດໝາຍ ໃຫ້ດຳເນີນຄະດີຟອກເງິນ ໄປຄຽງຄູ່ກັບການດຳເນີນຄະດີ ຄວາມຜິດຕົ້ນ, ເກັບກຳ ແລະ ສະໜອງບັນດາສະຖິຕິຕົວ ເລກ ການດຳເນີນຄະດີ ແລະ ການຕັດສິນ, ການກະທຳ ຜິດ ແລະ ການຟອກເງິນ, ການກັກ, ຍຶດ, ອາຍັດ, ຮິບ ຊັບ ແລະ ການກູ້ຄືນຊັບສິນ, ພ້ອມທັງກໍລະນີຕົວຢ່າງ ໃຫ້ແກ່ສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອນຳສົ່ງໃຫ້ ສາກົນ ທັນຕາມຮອບວຽນກຳນົດເວລາ; ເພີ່ມທະວີການ ຮ່ວມມືລະຫວ່າງປະເທດທາງອາຍາໃຫ້ຫຼາຍຂຶ້ນ ແລະ ການປະສານງານທຸກພາກສ່ວນ, ພ້ອມທັງສະແດງຄວາມຕັ້ງໃຈ ໃນການແກ້ໄຂຂໍ້ບົກຜ່ອງ ແລະ ສ້າງແຜນຮັບມືກັບຜົນກະທົບທີ່ອາດຈະເກີດຂຶ້ນ ໃນຊ່ວງໄລຍະທີ່ ສປປ ລາວ ຕົກຢູ່ໃນ ບັນຊີສີເທົາ.

ພ້ອມນີ້, ທີ່ປະຊຸມຍັງໄດ້ມີການຈັດເວທີສົນທະນາ ໂດຍມີຊ່ຽວຊານຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຈາກ ປະເທດ ໄທ, ກໍາປູເຈຍ, ຟີລິບປິນ ແລະ ສປປ ລາວ ແລກປ່ຽນປະສົບການກ່ຽວກັບຜົນກະທົບຂອງບັນຊີສີເທົາ, ພາລະ ບົດບາດ ແລະ ການຮ່ວມມືລະຫວ່າງປະເທດ ຂອງອົງການໄອຍະການປະຊາຊົນສູງສຸດ ໃນການດໍາເນີນການກູ້ຄືນຊັບ ສົນທີ່ໄດ້ຈາກການກະທໍາຜິດ. ຜູ້ເຂົ້າຮ່ວມສົນທະນາໄດ້ແລກປ່ຽນບົດຮຽນທີ່ສໍາຄັນ, ການແກ້ໄຂບັນດາຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ຈາກປະສົບການທີ່ປະເຊີນໃນຊ່ວງໄລຍະເວລາທີ່ຖືກກໍານົດຢູ່ໃນບັນຊີສີເທົາ ໂດຍອະທິບາຍໃຫ້ເຫັນຜົນ ກະທົບທາງເສດຖະກິດ ແລະ ພາບພົດຂອງປະເທດ ພ້ອມທັງບາດກ້າວການປະຕິບັດເພື່ອແກ້ໄຂຕາມຂໍ້ແນະນໍາຂອງ ອົງການ FATF.

ກອງປະຊຸມໄດ້ດໍາເນີນເປັນເວລາ 02 ວັນ ແລະ ໄດ້ສິ້ນສຸດລົງໃນເວລາ 17:00 ໂມງໃນວັນທີ 26 ມີນາ 2025. ຜູ້ເຂົ້າຮ່ວມກໍ່ໄດ້ມີການປະກອບຄໍາເຫັນ ແລະ ແລກປ່ຽນບົດຮຽນ ຊຶ່ງກັນ ແລະ ກັນ ຢ່າງກົງໄປກົງມາ ແລະ ມີຄວາມ ຟົດຟື້ນ ເຮັດໃຫ້ກອງປະຊຸມດັ່ງກ່າວ ສໍາເລັດລົງຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ຮຽບຮຽງຂ່າວ-ພາບໂດຍ: ຫ້ອງການ ທະນາຄານແຫ່ງ ສປປ ລາວ